# ສຸຂສັນວັນຣີຢູນຽນ

ປະພັນໂດຍ: ເຮືອງ ເດດທະວົງ

ເມື່ອຫວນຄືນຫຼັງ  ຄັ້ງທີ່ເປັນອະດີດ
ຈິດໃຈຍັງຄິດ  ເຖິງເພື່ອນຮ່ວມສະຖາບັນ
ດົນປານໃດເດ  ຈຶ່ງຈະໄດ້ພົບພານ
ລໍມື້ລໍວັນ  ແຕ່ວັນນັ້ນກໍມາເຖິງ

ອາຣີຊອນນ່າ  ສິບສອງ ມີນາ ປີສູນຫ້າ
ພວກເຮົານັກສຶກສາ  ໄດ້ພົບປະສ້າງສັນ
ກໍຄືວັນນີ້  ພວກເຮົາມາພົບກັນ
ໄດ້ຮ່ວມສັມພັນ  ນັບເປັນວັນໂຊກດີ

ເປັນອັນວ່າ  ສາມສິບປີຫນີຈາກ
ພວກເຮົາທົນລຳບາກ  ທຸກຍາກປາກຫມອງເຕັມທີ
ແຕ່ວັນວັນນີ້ຫນາ  ພວກເຮົາມີສຸຂຂີ
ຮ່ວມກັນອີກທີ  ແສນສຸດທີ່ພູມໃຈ

ກ່ອນຈາກກັນໄປ  ຂໍອາໄລໄວ້ວ່າ
ຖ້າມີເທື່ອຫນ້າ  ກໍຢາກໃຫ້ມາຮ່ວມໃຈ
ອະດີດເພື່ອນເອີຍ  ຢ່າງປະລະເລີຍຄວາມຫ່ວງໄຍ
ດ້ວຍຄວາມສົນໃຈ  ພວກເຮົາຈຶ່ງໄດ້ພົບກັນ